# ຂອບໃຈທີ່ເປັນຫ່ວງ

ໂດຍ:  ສາວຫູກເຈັດ

ວັນເວລານັບໄດ້ ເດືອນໜຶ່ງກໍກາຍໄປ
ພວກເຮົາໄລລາລາງ ຫ່າງໄກໄປຄົນກໍ້າ
ຂອບໃຈນຳອວນອ້າຍ ອິນທວາຫອມອ່ອນ
ສົ່ງກອນຫວານສອດຄ່ອງ ມາໃຫ້ນ້ອງຜູ່ຢູ່ໄກ

ກອນຈາກໃຈຂອງອ້າຍ ຈົດມາສົ່ງນ້ອງສາວຮັກ
ຫູກເຈັດເປັນນາມແຝງ ແຕ່ງກາບກອນດັ່ງກ້ອງ
ສຽງແຊວໆຄົນຍໍຍ້ອງ ຫຼາຍຄົນປອງລຶ້ງແກ່ນ
ທັງເປັນແຟນເປັນມິດພ້ອມ ດອມນ້ອງຜູ່ນັກຂຽນ

ໃຈພາກພຽນຕໍ່ຕັ້ງ ຫວັງສົ່ງຂ່າວເຖິງອວນຊາຍ
ຫຍຸ້ງຍາກການງານຫຼາຍ ຈຶ່ງງຽບຫາຍໄປພຽງຄັ້ງ
ແຕ່ໃຈນາງຝັງໝັ້ນ ສາຍສັມພັນຮັກແກ່ນ
ແຟນຫູກເຈັດທັງຢູ່ໄກແລະໃກ້ ໃຈນ້ອງນັ້ນຫ່ວງຫາ    ແທ້ເດີ

ອິນທວາອ້າຍນັ້ນໄດ້ ຖາມໄຖ່ເຖິງສຸຂ
ຂໍຕອບໄປວ່າມີທຸກ ອັ່ງໃນມະໂນເອົ້າ
ທັງໃນຊອນຄວາມເສົ້າ ເຫງົາໃຈຄຶດບໍ່ອອກ
ບອກກໍບອກບໍ່ໄດ້ ເໝືອນມີໄຂ້ຢູ່ໃຈ    ອ້າຍເອີຍ

ຊີວິດຍິງຄົນນີ້ໄຮ້ ໄຫຼຢູ່ກາງນະທີ
ບໍ່ເຄີຍມີຄວາມສົມຫວັງ ຕະຝັ່ງໄກເກີນຟ້າ

ນ້ຳຕາລິນໄຫຼເທ້ ທະເລຫຼວງຈຶ່ງປຸນປ່ຽນ
ຈຶ່ງທຽບຄວາມທຸກນ້ອງ ສວັນສ້າງໄດ້ສິ່ງມາ ອ້າຍເອີຍ

ເປັນເພາະຟ້າກັ່ນແກ້ງ ພິມສາບແຊ່ງສີພັນດອນ
ດວງສມອນຄືນພອຍ ຈຶ່ງປ່ອຍໄປຕາມຂັ້ນ
ມັນຊິເຫຫັນປີ້ນ ອີງຕາມດິນຟ້າເພິ່ນແຕ່ງ
ແຊ່ງເຮືອແພນັ້ນຖືກຕ້ອງ ຜີລບຸນນ້ອງແຊ່ງບໍ່ເຖິງ

ຖ້າເບິ່ງພາຍນອກນັ້ນ ຄືນເຫັນວ່ານ້ອງມີສຸຂ
ຄວາມອັ່ງອຸກພາຍໃນ ປ່ວຍໃຈບໍ່ເຫັນຮູ້
ດູພຽງເຜີນໃບຫນ້າ ຫວານຕາບໍ່ເອີບອີ່ມ
ສີພັນດອນມີແຕ່ຍີ້ມ ນ້ຳຕາຊ້ອນເຊື່ອງຢູ່ໃນ